**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 583/ກນງ

ນະຄອນຫຼວງວຽງຈັນ, ວັນທີ 22 APR 2022

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ແນະນຳການເປີດບັນຊີເງິນຝາກຮອງຮັບເງິນລົງທຶນຂອງບັນດາຫົວໜ່ວຍທຸລະກິດ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019.

ກົມນະໂຍບາຍເງິນຕາ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າໃນໄລຍະຜ່ານມາບັນດາຫົວໜ່ວຍທຸລະກິດໄດ້ຮັບການອຳນວຍຄວາມສະດວກໃນການເປີດບັນຊີເງິນຝາກນຳທະນາຄານທຸລະກິດໄດ້ດີສົມຄວນ, ຄຽງຄູ່ກັນກໍ່ຍັງມີຄວາມຫຍຸ້ງຍາກບາງກໍລະນີ ໂດຍສະເພາະແມ່ນການເປີດບັນຊີຮອງຮັບເງິນລົງທຶນພາຍຫຼັງທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ. ໂດຍອີງໃສ່ເງື່ອນໄຂທີ່ວິສາຫະກິດຕ້ອງປະກອບເອກະສານເພີ່ມຕື່ມຕາມການຮຽກຮ້ອງຂອງທະນາຄານທຸລະກິດເຮັດໃຫ້ວິສາຫະກິດຈຳນວນໜຶ່ງບໍ່ສາມາດເປີດບັນຊີໄດ້ເນື່ອງຈາກບໍ່ທັນມີໃບອະນຸຍາດດຳເນີນທຸລະກິດກັບຂະແໜງການກ່ຽວຂ້ອງໄດ້, ເປັນການສ້າງຄວາມຫຍຸ້ງຍາກໃນການເລີ່ມຕົ້ນທຸລະກິດ ຊຶ່ງເປັນບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂຕາມເນື້ອໃນຈິດໃຈຂອງຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ໃນນາມ ທະນາຄານແຫ່ງ ສປປ ລາວ, ກົມນະໂຍບາຍເງິນຕາ ຈຶ່ງແນະນຳມາຍັງທະນາຄານທຸລະກິດ ກ່ຽວກັບການເປີດບັນຊີເງິນຝາກໃຫ້ກັບຫົວໜ່ວຍທຸລະກິດຄື: ໃຫ້ສືບຕໍ່ນຳໃຊ້ເອກະສານຕາມຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019 ເປັນບ່ອນອີງໃນການພິຈາລະນາເປີດບັນຊີໃຫ້ລູກຄ້າໃນເບື້ອງຕົ້ນກ່ອນ, ສ່ວນເອກະສານອື່ນໆທີ່ມີຄວາມຈຳເປັນຕ້ອງຮຽກໃຫ້ຫົວໜ່ວຍທຸລະກິດປະກອບເພີ່ມຕື່ມໃນການຊອກຮູ້ລູກຄ້ານອກຈາກທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບດັ່ງກ່າວ ແມ່ນໃຫ້ທະນາຄານທຸລະກິດອະນຸຍາດໃຫ້ລູກຄ້າປະກອບເພີ່ມພາຍຫຼັງທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງແລ້ວ ໂດຍສາມາດກຳນົດຂອບເຂດເວລາໃນກໍລະນີບໍ່ໄດ້ຮັບເອກະສານຕາມກຳນົດເວລາ ທະນາຄານທຸລະກິດອາດໂຈະນຳໃຊ້ບັນຊີລູກຄ້າຊົ່ວຄາວຈົນກ່ວາລູກຄ້າຈະເຂົ້າມາພົວພັນສະໜອງເອກະສານໃຫ້ຕາມທະນາຄານທຸລະກິດຮຽກເກັບ.

ດັ່ງນັ້ນ, ຈຶ່ງຂໍແນະນຳມາຍັງທ່ານເພື່ອພິຈາລະນາຈັດຕັ້ງຜັນຂະຫຍາຍເປັນອັນລະອຽດເພື່ອອຳນວຍຄວາມສະດວກແກ່ລູກຄ້າກໍຄືບັນດາຫົວໜ່ວຍທຸລະກິດກ່ຽວຂ້ອງດ້ວຍ.

**ຫົວໜ້າກົມນະໂຍບາຍເງິນຕາ**

ທະນາຄານ ແຫ່ງ ສປປ ລາວ / ກົມນະໂຍບາຍເງິນຕາ

ຂັນແກ້ວ ຫຼ້າມະນີວົງ